# ບົດລາຍງານສະຖິຕິເງິນຕາ
## ປະຈຳໄຕມາດ ທີ 1 ປີ 2021

ທະນາຄານແຫ່ງ ສປປ ລາວ

# ສາລະບານ


I. ສະພາບລວມ ... 1

II. ອັດຕາເງິນເຟີ້ ... 1

III. ຂະແໜງເງິນຕາ-ການເງິນ ... 2

3.1. ນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ... 2

3.2. ຖານເງິນຕາ ... 3

3.3. ປະລິມານເງິນ ... 3

3.4. ອັດຕາດອກເບ້ຍ ... 4

3.5. ເງິນຝາກ ... 4

3.6. ສິນເຊື່ອ ... 5

3.7. ລະບົບສະຖາບັນການເງິນ-ເງິນຕາ ... 6

IV. ດຸນການຊໍາລະກັບຕ່າງປະເທດ ... 6

4.1. ດຸນການຊໍາລະລວມ ... 6

4.2. ດຸນບັນຊີຊໍາລະປົກກະຕິ ... 7

4.2.1 ດຸນການຄ້າດ້ານສິນຄ້າ ... 7

4.3. ດຸນບັນຊີການເງິນ ... 9

## ສາລະບານຮູບ

ຮູບທີ 1. ໂຄງປະກອບຂອງອັດຕາເງິນເຟີ້ ........ 1
ຮູບທີ 2. ອັດຕາເງິນເຟີ້ພື້ນຖານ ແລະ ບໍ່ເປັນພື້ນຖານ, ອັດຕາເງິນເຟີ້ສິນຄ້າພາຍໃນ ແລະ ສິນຄ້ານຳເຂົ້າ........ 2
ຮູບທີ 3. ການປ່ຽນແປງຂອງອັດຕາແລກປ່ຽນ (+) ແຂງຄ່າ ແລະ (−) ອ່ອນຄ່າ........ 2
ຮູບທີ 4. ໂຄງປະກອບຂອງຖານເງິນຕາ........ 3
ຮູບທີ 5. ການຂະຫຍາຍຕົວຂອງປະລິມານເງິນ M2........ 3
ຮູບທີ 6. ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງ ທທກ ໄລຍະ 12 ເດືອນ........ 4
ຮູບທີ 7. ເງິນຝາກຂອງທະນາຄານທຸລະກິດ........ 5
ຮູບທີ 8. ການປະກອບສ່ວນຂອງສິນເຊື່ອ ແຍກຕາມຂະແໜງການ........ 5
ຮູບທີ 9. ດຸນການຊຳລະກັບຕ່າງປະເທດ........ 7
ຮູບທີ 10. ໂຄງປະກອບຂອງດຸນບັນຊີຊຳລະປົກກະຕິ........ 7
ຮູບທີ 11. ການສົ່ງອອກສິນຄ້າ........ 8
ຮູບທີ 12. ການນຳເຂົ້າສິນຄ້າ........ 9
ຮູບທີ 13. ດຸນບັນຊີການເງິນ........ 9

# ສາລະບານຕາຕະລາງ

ຕາຕະລາງທີ 1. ດັດຊະນີລາຄາຜູ້ຊົມໃຊ້ (Consumer Price Index) ....10
ຕາຕະລາງທີ 2. ອັດຕາເງິນເຟີ້ (Inflation Rate) ....11
ຕາຕະລາງທີ 3. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ (Balance Sheet of the BOL) ....12
ຕາຕະລາງທີ 4. ຖານະການເງິນຂອງທະນາຄານທຸລະກິດ (Commercial Banks' Survey) ....13
ຕາຕະລາງທີ 5. ຖານະການເງິນຂອງລະບົບທະນາຄານ (Monetary Survey) ....14
ຕາຕະລາງທີ 6. ຊັບສິນຂອງທະນາຄານທຸລະກິດ (Assets of Commercial Banks) ....15
ຕາຕະລາງທີ 7. ອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ (Official and Parallel Market Exchange Rate) ....16
ຕາຕະລາງທີ 8. ອັດຕາດອກເບ້ຍສະເລ່ຍຂອງທະນາຄານທຸລະກິດ (Commercial Bank' Interest Rate) ....17
ຕາຕະລາງທີ 9. ເງິນຝາກຂອງທະນາຄານທຸລະກິດ (Commercial Bank' Deposit) ....18
ຕາຕະລາງທີ 10. ເງິນຝາກຂອງທະນາຄານທຸລະກິດ ແຍກຕາມກຸ່ມທະນາຄານ (Commercial Bank' Deposit by Bank Group) ....19
ຕາຕະລາງທີ 11. ສິນເຊື່ອຂອງທະນາຄານທຸລະກິດ (Commercial Bank' Credit) ....20
ຕາຕະລາງທີ 12. ສິນເຊື່ອຂອງທະນາຄານທຸລະກິດ ແຍກຕາມກຸ່ມທະນາຄານ (Commercial Bank' Credit by Bank Group) ....21
ຕາຕະລາງທີ 13. ດຸນການຊຳລະກັບຕ່າງປະເທດ (Balance Of Payments) ....22
ຕາຕະລາງທີ 14. ການຄ້າຕ່າງປະເທດ (Foreign Trade) ....24
ຕາຕະລາງທີ 15. ທີ່ຕັ້ງສຳນັກງານຂອງແຕ່ລະທະນາຄານທຸລະກິດ (List of Commercial Banks) ....25

# ບົດນຳ

ໃນບົດລາຍງານສະຖິຕິເງິນຕາປະຈຳໄຕມາດ ແມ່ນການສັງລວມຂໍ້ມູນສະຖິຕິເງິນຕາ ຂອງຂະແໜງການທະນາຄານ ຊຶ່ງກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ໄດ້ເກັບກຳສັງລວມ ແລ້ວເຜີຍແຜ່ບົດລາຍງານສະຖິຕິເງິນຕານີ້ ທາງເວັບໄຊຂອງ ທຫລ ເພື່ອໃຫ້ສັງຄົມໄດ້ນຳໃຊ້ຕາມຄວາມຈຳເປັນ ແລະ ຕ້ອງການຂອງແຕ່ລະພາກສ່ວນ.

ເຖິງຢ່າງໃດກໍຕາມ, ມີບາງຂໍ້ມູນໃນບົດລາຍງານສະບັບນີ້ ຍັງເປັນຕົວເລກຄາດຄະເນເບື້ອງຕົ້ນ ແລະ ອາດມີການປັບປຸງຂໍ້ມູນຄືນ. ສະນັ້ນ, ຂ້າພະເຈົ້າຕາງໜ້າກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ຈຶ່ງຂໍອະໄພມາຍັງທຸກໆທ່ານມານະທີ່ນີ້ດ້ວຍ. ພ້ອມນີ້, ຂໍຮັບເອົາຄຳຕິຊົມຕ່າງໆຈາກທ່ານຜູ້ຊົມໃຊ້ດ້ວຍຄວາມຈິງໃຈ ເພື່ອການປັບປຸງບົດລາຍງານສະຖິຕິເງິນຕາສະບັບຕໍ່ໄປ ໃຫ້ມີຄວາມສົມບູນຍິ່ງຂຶ້ນ.

**ຫົວໜ້າກົມນະໂຍບາຍເງິນຕາ**

## I. ສະພາບລວມ

ໃນໄຕມາດ 1 ຂອງປີ 2021, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ດຳເນີນນະໂຍບາຍເງິນຕາ ໂດຍສືບຕໍ່ນຳໃຊ້ເຄື່ອງມືທາງອ້ອມ ເປັນຕົ້ນແມ່ນໄດ້ຮັກສາອັດຕາດອກເບ້ຍພື້ນຖານຂອງ ທຫລ ໃນລະດັບ 3% ຕໍ່ປີ, ຮັກສາອັດຕາສ່ວນເງິນແຮຝາກບັງຄັບໄວ້ໃນລະດັບ 4% ສຳລັບເງິນກີບ ແລະ 8% ສຳລັບເງິນຕາຕ່າງປະເທດ; ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນ ດ້ວຍການກຳນົດອັດຕາແລກປ່ຽນອ້າງອີງປະຈຳວັນ ເພື່ອເປັນບ່ອນອີງໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ, ໄດ້ສືບຕໍ່ຊຸກຍູ້ຕະຫຼາດເປີດ, ຕະຫຼາດລະຫວ່າງທະນາຄານ ແລະ ປະຕິບັດພາລະບົດບາດເປັນຜູ້ດັດສົມແຫຼ່ງສຸດທ້າຍຢ່າງເປັນປົກກະຕິ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ, ທຫລ ສາມາດຮັກສາສະເຖຍລະພາບເງິນຕາແຫ່ງຊາດໄດ້ ສະແດງອອກຄື: ອັດຕາເງິນເຟີ້ ຢູ່ໃນລະດັບ 2,16%, ອັດຕາແລກປ່ຽນເງິນກີບທຽບເງິນໂດລາສະຫະລັດ ອ່ອນຄ່າ 0,54%; ປະລິມານເງິນ (M2) ເພີ່ມຂຶ້ນ 2,07%; ເງິນຝາກຂອງທະນາຄານທຸລະກິດ ເພີ່ມຂຶ້ນ 2,82%; ສິນເຊື່ອຂອງທະນາຄານທຸລະກິດ ຫຼຸດລົງ 1,65%; ຄັງສຳຮອງເງິນຕາຕ່າງປະເທດສາມາດກຸ້ມການນຳເຂົ້າໄດ້ 3,84 ເດືອນ. ນອກຈາກນີ້, ດ້ານການຄ້າກັບຕ່າງປະເທດ ມີມູນຄ່າການຄ້າທັງໝົດ 3.757,63 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ, ການສົ່ງອອກ ມີມູນຄ່າ 2.036,30 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 19,18% ແລະ ການນຳເຂົ້າ ມີມູນຄ່າ 1.721,33 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 15,39% ທຽບໃສ່ໄຕມາດຜ່ານມາ.

## II. ອັດຕາເງິນເຟີ້

ອັດຕາເງິນເຟີ້ໃນໄຕມາດ 1 ຂອງປີ 2021 ຢູ່ໃນລະດັບ 2,16% ຫຼຸດລົງຈາກລະດັບ 3,26% ໃນໄຕມາດ 4/2020. ປັດໄຈທີ່ເຮັດໃຫ້ອັດຕາເງິນເຟີ້ຫຼຸດລົງ ເມື່ອທຽບກັບໄຕມາດຜ່ານມາ ແມ່ນຍ້ອນການເພີ່ມຂຶ້ນໃນຈັງຫວະທີ່ໜ້ອຍກວ່າໄຕມາດຜ່ານມາຂອງໝວດອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ ຢູ່ໃນລະດັບ 2,58% ຈາກ 4,96% ເປັນຕົ້ນ ລາຄາເຂົ້າສານ ແລະ ຜັກສົດ ເມື່ອທຽບກັບໄລຍະດຽວກັນຂອງປີຜ່ານມາ ບວກກັບໝວດໄປສະນີ ແລະ ໂທລະຄົມມະນາຄົມ ຢູ່ໃນລະດັບ 2,39% ຈາກ 5,74%, ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ ຢູ່ໃນລະດັບ 3,59% ຈາກ 4,80%, ໝວດເຄື່ອງໃຊ້ໃນເຮືອນ ຢູ່ໃນລະດັບ 3,23% ຈາກ 4,86%, ໝວດຮັກສາສຸຂະພາບ ຢູ່ໃນລະດັບ 3,79% ຈາກ 5,68% ແລະ ໝວດສິນຄ້າ ແລະ ບໍລິການອື່ນໆ ຢູ່ໃນລະດັບ 8,58% ຈາກ 10,40%.

**ຮູບທີ 1. ໂຄງປະກອບຂອງອັດຕາເງິນເຟີ້**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

**ຮູບທີ 2. ອັດຕາເງິນເຟີ້ພື້ນຖານ ແລະ ບໍ່ເປັນພື້ນຖານ, ອັດຕາເງິນເຟີ້ສິນຄ້າພາຍໃນ ແລະ ສິນຄ້ານຳເຂົ້າ**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

# III. ຂະແໜງເງິນຕາ-ການເງິນ

## 3.1. ນະໂຍບາຍເງິນຕາ ແລະ ນະໂຍບາຍອັດຕາແລກປ່ຽນ

ໃນໄຕມາດ 1 ຂອງປີ 2021, ທຫລ ໄດ້ດຳເນີນນະໂຍບາຍເງິນຕາ ໂດຍສືບຕໍ່ນຳໃຊ້ເຄື່ອງມືທາງອ້ອມ ເປັນຕົ້ນແມ່ນໄດ້ຮັກສາອັດຕາດອກເບ້ຍພື້ນຖານຂອງ ທຫລ ໃນລະດັບ 3% ຕໍ່ປີ, ຮັກສາອັດຕາສ່ວນເງິນແຮຝາກບັງຄັບໄວ້ໃນລະດັບ 4% ສຳລັບເງິນກີບ ແລະ 8% ສຳລັບເງິນຕາຕ່າງປະເທດ; ສືບຕໍ່ຊຸກຍູ້ຕະຫຼາດເປີດ, ຕະຫຼາດລະຫວ່າງທະນາຄານ ແລະ ປະຕິບັດພາລະບົດບາດເປັນຜູ້ດັດສົມແຫຼ່ງສຸດທ້າຍຢ່າງເປັນປົກກະຕິ.

ທຫລ ສືບຕໍ່ກຳນົດອັດຕາແລກປ່ຽນອ້າງອີງເງິນກີບທຽບເງິນໂດລາ ປະຈຳວັນ ເພື່ອໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ປະຕິບັດໃນຂອບເຂດ ±0,25% ແລະ ກຳນົດສ່ວນຕ່າງລະຫວ່າງອັດຕາຊື້-ຂາຍ ສຳລັບເງິນກີບທຽບເງິນເອີໂຣ 0,50%, ເງິນກີບທຽບເງິນບາດ 0,75% ແລະ 2% ສຳລັບເງິນກີບທຽບສະກຸນເງິນຕາອື່ນໆ.

ຜ່ານການຈັດຕັ້ງປະຕິບັດບັນດາມາດຕະການອັດຕາແລກປ່ຽນຄືດັ່ງກ່າວນັ້ນ, ອັດຕາແລກປ່ຽນມີການເໜັງຕີງຄື: ອັດຕາແລກປ່ຽນສະເລ່ຍທົ່ວລະບົບ ເງິນກີບທຽບເງິນໂດລາສະຫະລັດ ອ່ອນຄ່າ 0,54%, ຢູ່ໃນລະດັບ 9.711,61 ກີບ/ໂດລາສະຫະລັດ ແລະ ເງິນກີບທຽບເງິນບາດ ອ່ອນຄ່າ 1,80%, ຢູ່ໃນລະດັບ 334,26 ກີບ/ບາດ.

**ຮູບທີ 3. ການປ່ຽນແປງຂອງອັດຕາແລກປ່ຽນ (+) ແຂງຄ່າ ແລະ (-) ອ່ອນຄ່າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.2. ຖານເງິນຕາ

ຮອດທ້າຍໄຕມາດ 1 ຂອງປີ 2021, ຖານເງິນຕາ ມີຍອດເຫຼືອ 33.720,17 ຕື້ກີບ, ເພີ່ມຂຶ້ນ 3,85% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 16,94% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດທີ່ເຮັດໃຫ້ຖານເງິນຕາເພີ່ມຂຶ້ນໃນໄຕມາດນີ້ ແມ່ນຍ້ອນທະນາຄານທຸລະກິດຮັບເງິນໂອນຈາກຕ່າງປະເທດ ແລະ ທຫລ ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດໂຄວິດ-19.

**ຮູບທີ 4. ໂຄງປະກອບຂອງຖານເງິນຕາ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.3. ປະລິມານເງິນ

ປະລິມານເງິນ (M2) ມີຍອດທັງໝົດ 114.210,78 ຕື້ກີບ, ເພີ່ມຂຶ້ນ 2,07% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 15,37% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຕົ້ນຕໍຍ້ອນການສືບຕໍ່ໄຫຼເຂົ້າຂອງກະແສເງິນລົງທຶນຈາກຕ່າງປະເທດໃນຂະແໜງການອຸດສາຫະກໍາ ຕົ້ນຕໍແມ່ນຈາກໂຄງການສ້າງທາງລົດໄຟລາວ-ຈີນ, ການປ່ອຍສິນເຊື່ອໃຫ້ພາກສ່ວນເສດຖະກິດເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດໂຄວິດ-19.

ອົງປະກອບຂອງປະລິມານເງິນ (M2) ປະກອບມີ: ເງິນຝາກເປັນສະກຸນເງິນກີບ ກວມເອົາ 40,83%, ເງິນຝາກເປັນສະກຸນເງິນຕາຕ່າງປະເທດ ກວມເອົາ 51,51% ແລະ ເງິນຢູ່ນອກລະບົບທະນາຄານ ກວມເອົາ 7,66%.

**ຮູບທີ 5. ການຂະຫຍາຍຕົວຂອງປະລິມານເງິນ M2**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

ການປະກອບສ່ວນຕໍ່ການຂະຫຍາຍຕົວຂອງ M2




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ

## 3.4. ອັດຕາດອກເບ້ຍ

ໃນໄຕມາດນີ້, ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງທະນາຄານທຸລະກິດ ມີການປ່ຽນແປງເລັກໜ້ອຍ. ໃນນີ້, ອັດຕາດອກເບ້ຍເງິນຝາກມີກຳນົດ 12 ເດືອນ ສະກຸນເງິນກີບ ໄດ້ຫຼຸດລົງຈາກ 5,37% ມາເປັນ 5,33%, ແຕ່ ສະກຸນເງິນບາດ ເພີ່ມຂຶ້ນຈາກ 3,40% ມາເປັນ 3,51% ແລະ ສະກຸນເງິນໂດລາສະຫະລັດ ເພີ່ມຂຶ້ນຈາກ 3,68% ມາ ເປັນ 3,76%. ພ້ອມດຽວກັນນັ້ນ, ອັດຕາດອກເບ້ຍເງິນກູ້ຂອງທະນາຄານທຸລະກິດ ໄລຍະເວລາ 1 ປີ ສະກຸນເງິນກີບ ເພີ່ມຂຶ້ນຈາກ 9,82% ມາເປັນ 10,02%, ສະກຸນເງິນບາດ ເພີ່ມຂຶ້ນຈາກ 8,44% ມາເປັນ 8,70% ແລະ ສະກຸນເງິນ ໂດລາສະຫະລັດ ເພີ່ມຂຶ້ນຈາກ 8,18% ມາເປັນ 8,30%.

**ຮູບທີ 6. ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງ ທທກ ໄລຍະ 12 ເດືອນ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.5. ເງິນຝາກ

ເງິນຝາກຂອງທະນາຄານທຸລະກິດ (ບໍ່ລວມເງິນຝາກຂອງຜູ້ມີຖິ່ນຖານຢູ່ຕ່າງປະເທດ) ຮອດທ້າຍໄຕມາດ 1 ຂອງປີ 2021 ມີຍອດທັງໝົດ 105.412,26 ຕື້ກີບ, ເພີ່ມຂຶ້ນ 2,82% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ

16,65% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ໃນນີ້, ເງິນຝາກເປັນສະກຸນເງິນກີບ ເພີ່ມຂຶ້ນ 1,71%, ກວມເອົາ 44,20% ຂອງເງິນຝາກທັງໝົດແລະ ເງິນຝາກເປັນສະກຸນເງິນຕາຕ່າງປະເທດ ເພີ່ມຂຶ້ນ 3,71%, ກວມເອົາ 55,80% ຂອງເງິນຝາກທັງໝົດ.

**ຮູບທີ 7. ເງິນຝາກຂອງທະນາຄານທຸລະກິດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.6. ສິນເຊື່ອ

ສິນເຊື່ອຂອງທະນາຄານທຸລະກິດ ຮອດທ້າຍໄຕມາດ 1 ຂອງປີ 2021 ມີຍອດທັງໝົດ 76.948,82 ຕື້ກີບ, ຫຼຸດລົງ 1,65% ທຽບໃສ່ໄຕມາດຜ່ານມາ, ແຕ່ເພີ່ມຂຶ້ນ 2,22% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ໃນໄຕມາດນີ້, ສິນເຊື່ອ (ແຍກຕາມຂະແໜງການ) ທີ່ປະກອບສ່ວນຕໍ່ການຂະຫຍາຍຕົວຂອງສິນເຊື່ອທັງໝົດ ປະກອບມີ: ຂະແໜງບໍລິການ 0,38%, ຂະແໜງການຄ້າ 0,08%, ຂະແໜງອຸດສາຫະກຳ 0,01%, ຂະແໜງກໍ່ສ້າງ -0,40% ແລະ ຂະແໜງການອື່ນໆ[1] -1,47%.

**ຮູບທີ 8. ການປະກອບສ່ວນຂອງສິນເຊື່ອ ແຍກຕາມຂະແໜງການ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

[1] ຂະແໜງການອື່ນໆປະກອບມີ: ຂະແໜງກະສິກຳ, ຂະແໜງຂົນສົ່ງ, ຂະແໜງສະໜອງວັດຖຸ ແລະ ເຕັກນິກ, ຂະແໜງຫັດຖະກຳ ແລະ ຂະແໜງອື່ນໆ.

## 3.7. ລະບົບສະຖາບັນການເງິນ-ເງິນຕາ

ຮອດທ້າຍໄຕມາດ 1 ຂອງປີ 2021, ທະນາຄານທຸລະກິດ ມີຈຳນວນທັງໝົດ 44 ທະນາຄານ[2] (ຕາຕະລາງທີ 15). ໃນນັ້ນ, ທົ່ວລະບົບທະນາຄານທຸລະກິດ ມີຍອດຊັບສິນທັງໝົດ 171.290,34 ຕື້ກີບ, ເພີ່ມຂຶ້ນ 5,04%; ຍອດເງິນຝາກທັງໝົດ (ບໍ່ລວມເງິນຝາກຂອງຜູ້ມີຖິ່ນຖານຢູ່ຕ່າງປະເທດ) 105.412,26 ຕື້ກີບ, ເພີ່ມຂຶ້ນ 2,82%. ນອກຈາກນີ້, ທະນາຄານທຸລະກິດໄດ້ປະກອບສ່ວນຊຸກຍູ້ເສດຖະກິດໃຫ້ຂະຫຍາຍຕົວ ໃນນັ້ນ, ສິນເຊື່ອໃຫ້ພາກ ສ່ວນເສດຖະກິດ ມີຍອດທັງໝົດ 76.948,82 ຕື້ກີບ, ຫຼຸດລົງ 1,65%. ຄຽງຄູ່ກັນນັ້ນ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ມີທັງໝົດ 193 ແຫ່ງ[3], ເພີ່ມຂຶ້ນ 9 ແຫ່ງ.

ສຳລັບວຽກງານຕະຫຼາດຫຼັກຊັບ, ຮອດທ້າຍໄຕມາດທີ 1 ຂອງປີ 2021, ມີບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວທັງໝົດ 11 ບໍລິສັດ. ດັດຊະນີຕະຫຼາດຫຼັກຊັບລາວປິດຢູ່ທີ່ 578,28 ຈຸດ, ຫຼຸດລົງ 3,41% ທຽບໃສ່ໄຕມາດຜ່ານມາ. ໃນນີ້, ມີປະລິມານການຊື້-ຂາຍຮຸ້ນທັງໝົດ 1,39 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍທັງໝົດ 5,77 ຕື້ກີບ, ຫຼຸດລົງ 49,96% ທຽບໃສ່ໄຕມາດຜ່ານມາ. ໃນນັ້ນ, ມູນຄ່າການຊື້-ຂາຍຮຸ້ນຂອງນັກລົງທຶນຕ່າງປະເທດ ກວມອັດຕາສ່ວນ 37,96% ຂອງມູນຄ່າການຊື້-ຂາຍຮຸ້ນທັງໝົດ. ສາເຫດທີ່ມູນຄ່າຊື້-ຂາຍຮຸ້ນທັງໝົດຫຼຸດລົງຫຼາຍໃນໄຕມາດນີ້ ຕົ້ນຕໍແມ່ນມາຈາກການຫຼຸດລົງຂອງການຊື້-ຂາຍຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ຮຸ້ນຂອງບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ພ້ອມດຽວກັນນີ້, ນັກລົງທຶນຕ່າງປະເທດທີ່ເປັນຜູ້ຊື້-ຂາຍຫຼັກໃນຕະຫຼາດໃນໄລຍະຜ່ານມາ ກໍຖອນຕົວອອກຈາກການຊື້-ຂາຍຮຸ້ນ ຈຳນວນຫຼາຍ ເຮັດໃຫ້ການຊື້-ຂາຍຫຼຸດລົງເຄິ່ງໜຶ່ງໃນໄຕມາດນີ້.

# IV. ດຸນການຊຳລະກັບຕ່າງປະເທດ

## 4.1. ດຸນການຊຳລະລວມ

ດຸນຊຳລະກັບຕ່າງປະເທດ ປະຈຳໄຕມາດ 1 ຂອງປີ 2021, ດຸນລວມ ຂາດດຸນ 64,90 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ, ດຸນບັນຊີຊຳລະປົກກະຕິ ຂາດດຸນ 46,11 ລ້ານໂດລາສະຫະລັດທຽບເທົ່າ ແລະ ດຸນບັນຊີການເງິນມີກະແສເງິນໄຫຼອອກສຸດທິ 75,65 ລ້ານໂດລາສະຫະລັດທຽບເທົ່າ. ຮອດທ້າຍໄຕມາດ 1 ຂອງປີ 2021, ຄັງສຳຮອງເງິນຕາຕ່າງປະເທດ ມີຍອດເຫຼືອ 1.254,27 ລ້ານໂດລາສະຫະລັດ ແລະ ສາມາດກຸ້ມການນຳເຂົ້າສິນຄ້າໄດ້ 3,84 ເດືອນ[4].

---

[2] ໃນນັ້ນ, ມີ 114 ສາຂາ, 541 ໜ່ວຍບໍລິການ, 42 ໜ່ວຍແລກປ່ຽນເງິນຕາ ແລະ ຕູ້ ATM 1.349 ໜ່ວຍ.

[3] ໃນນັ້ນ, ສະຖາບັນການເງິນທີ່ຮັບຝາກ 21 ແຫ່ງ, ສະຖາບັນການເງິນທີ່ບໍ່ຮັບຝາກ 86 ແຫ່ງ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ 27 ແຫ່ງ, ບໍລິສັດເຊົ່າສິນເຊື່ອ 29 ແຫ່ງ ແລະ ໂຮງຊວດຈຳ 30 ແຫ່ງ.

[4] ມູນຄ່າສິນຄ້ານຳເຂົ້າສະເລ່ຍຕໍ່ເດືອນໃນປີ 2021 ແມ່ນນຳໃຊ້ 326,56 ລ້ານໂດລາສະຫະລັດ (ຕົວເລກຄາດຄະເນ) ຊຶ່ງບໍ່ລວມການນຳເຂົ້າສິນຄ້າທີ່ມີແຫຼ່ງທຶນຮອງຮັບຢູ່ຕ່າງປະເທດ. ໃນນັ້ນ, ລວມມີສິນຄ້າທີ່ໄດ້ຮັບນະໂຍບາຍການສົ່ງເສີມການລົງທຶນ ປະກອບດ້ວຍລະຫັດເສຍພາສີຫຼຸດຜ່ອນຕາມນະໂຍບາຍສົ່ງເສີມການລົງທຶນ; ເສຍພາສີ, ຍົກເວັ້ນອາກອນ ແລະ ພັນທະອື່ນໆ ຕາມກົດໝາຍສົ່ງເສີມການລົງທຶນ; ຍົກເວັ້ນອາກອນມູນຄ່າເພີ່ມ, ເສຍພາສີ ແລະ ພັນທະອື່ນໆ ຕາມກົດໝາຍສົ່ງເສີມລົງທຶນ ແລະ ອື່ນໆ.

ຮູບທີ 9. ດຸນການຊໍາລະກັບຕ່າງປະເທດ




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.2. ດຸນບັນຊີຊໍາລະປົກກະຕິ

ດຸນບັນຊີຊໍາລະປົກກະຕິ ຂາດດຸນຢູ່ໃນລະດັບ 46,11 ລ້ານໂດລາສະຫະລັດທຽບເທົ່າ, ຂາດດຸນເພີ່ມຂຶ້ນ 19,21% ທຽບໃສ່ໄຕມາດຜ່ານມາ. ສາເຫດຕົ້ນຕໍຍ້ອນດຸນລາຍຮັບຂັ້ນໜຶ່ງສຸດທິ ຂາດດຸນເພີ່ມຂຶ້ນ ເນື່ອງຈາກການຊໍາລະດອກເບ້ຍເງິນກູ້ຢືມຈາກຕ່າງປະເທດຂອງພາກລັດຖະບານ ແລະ ພາກເອກະຊົນ ແລະ ເງິນໂອນກໍາໄລ ແລະ ເງິນປັນຜົນກັບຄືນຕ່າງປະເທດ ເພີ່ມຂຶ້ນ, ເຖິງແມ່ນວ່າດຸນການຄ້າດ້ານສິນຄ້າ ທີ່ເປັນດຸນຫຼັກໃນດຸນບັນຊີຊໍາລະປົກກະຕິ ຈະເກີນດຸນກໍຕາມ.

ຮູບທີ 10. ໂຄງປະກອບຂອງດຸນບັນຊີຊໍາລະປົກກະຕິ




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

### 4.2.1 ດຸນການຄ້າດ້ານສິນຄ້າ

ດຸນການຄ້າດ້ານສິນຄ້າ ເກີນດຸນຢູ່ໃນລະດັບ 314,97 ລ້ານໂດລາສະຫະລັດທຽບເທົ່າ ເກີນດຸນເພີ່ມຂຶ້ນ 45,25% ທຽບໃສ່ໄຕມາດຜ່ານມາ. ສາເຫດຍ້ອນການສົ່ງອອກສິນຄ້າ ເພີ່ມຂຶ້ນ 19,18% ຈາກເພີ່ມຂຶ້ນ 4,56% ໃນໄຕມາດຜ່ານມາ ບວກກັບການນໍາເຂົ້າສິນຄ້າ ເພີ່ມຂຶ້ນໃນຈັງຫວະທີ່ໜ້ອຍກວ່າໄຕມາດຜ່ານມາ ຈາກເພີ່ມຂຶ້ນ 20,40% ມາເປັນ 15,39%.

**ການສົ່ງອອກສິນຄ້າ:** ມີມູນຄ່າ 2.036,30 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 19,18% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 31,14% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດທີ່ເຮັດໃຫ້ການສົ່ງອອກເພີ່ມຂຶ້ນ ແມ່ນມາຈາກການເພີ່ມຂຶ້ນຂອງການສົ່ງອອກຜະລິດຕະພັນບໍ່ແຮ່; ຜະລິດຕະພັນກະສິກຳ; ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ; ຜະລິດຕະພັນອື່ນໆ, ອາຫານປຸງແຕ່ງ, ເຄື່ອງດື່ມ ແລະ ຢາສູບ ແລະ ຜະລິດຕະພັນຈາກສັດ. ສິນຄ້າສົ່ງອອກຫຼັກໃນໄຕມາດນີ້ປະກອບມີ: ຜະລິດຕະພັນບໍ່ແຮ່ ກວມເອົາ 25,30%; ຮອງລົງມາແມ່ນກະແສໄຟຟ້າ ກວມເອົາ 21,78%; ຜະລິດຕະພັນກະສິກຳ ກວມເອົາ 17,42%; ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ ກວມເອົາ 10,56%; ຜະລິດຕະພັນອື່ນໆ ກວມເອົາ 5,83%; ອາຫານປຸງແຕ່ງ, ເຄື່ອງດື່ມ ແລະ ຢາສູບ ກວມເອົາ 5,44% ແລະ ຜະລິດຕະພັນຈາກສັດ ກວມເອົາ 4,48% ຂອງການສົ່ງອອກທັງໝົດ.

**ຮູບທີ 11. ການສົ່ງອອກສິນຄ້າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

**ການນຳເຂົ້າສິນຄ້າ:** ມີມູນຄ່າ 1.721,33 ລ້ານໂດລາສະຫະລັດທຽບເທົ່າ, ເພີ່ມຂຶ້ນ 15,39% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 22,34% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດທີ່ເຮັດໃຫ້ການນຳເຂົ້າເພີ່ມຂຶ້ນ ແມ່ນມາຈາກການເພີ່ມຂຶ້ນຂອງການນຳເຂົ້າຜະລິດຕະພັນອື່ນໆ[5]; ອາຫານ, ເຄື່ອງດື່ມ, ຢາ ແລະ ເຄື່ອງໃຊ້ສອຍທົ່ວໄປ; ນ້ຳມັນດິບ, ນ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ອື່ນໆ; ຍານພະຫະນະ ແລະ ອຸປະກອນກ່ຽວຂ້ອງ; ເຄື່ອງຈັກ ແລະ ອຸປະກອນ ແລະ ເຄື່ອງໄຟ້ຟ້າ ແລະ ອຸປະກອນເຄື່ອງໃຊ້ໄຟຟ້າອື່ນໆ. ສິນຄ້ານຳເຂົ້າຫຼັກໃນໄຕມາດນີ້ໄດ້ແກ່: ຜະລິດຕະພັນອື່ນໆ ກວມເອົາ 18,62%; ຮອງລົງມາແມ່ນອາຫານ, ເຄື່ອງດື່ມ, ຢາ ແລະ ເຄື່ອງໃຊ້ສອຍທົ່ວໄປ ກວມເອົາ 14,14%; ນ້ຳມັນດິບ, ນ້ຳມັນເຊື້ອໄຟ, ນ້ຳມັນເຄື່ອງ ແລະ ອື່ນໆ ກວມເອົາ 12,10%, ຍານພະຫະນະ ແລະ ອຸປະກອນກ່ຽວຂ້ອງ ກວມເອົາ 10,16%, ເຄື່ອງຈັກ ແລະ ອຸປະກອນ ກວມເອົາ 8,84% ແລະ ເຄື່ອງໄຟ້ຟ້າ ແລະ ອຸປະກອນເຄື່ອງໃຊ້ໄຟຟ້າອື່ນໆ ກວມເອົາ 8,72% ຂອງການນຳເຂົ້າທັງໝົດ.

[5] ເປັນຕົ້ນແມ່ນຄຳ, ທອງແດງ ແລະ ໂລຫະມີຄ່າອື່ນໆ, ໄຟຟ້າ ແລະ ຊີມັງ, ປູນຂາວ ແລະ ວັດຖຸດິບທຳມະຊາດ.

**ຮູບທີ 12. ການນຳເຂົ້າສິນຄ້າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.3. ດຸນບັນຊີການເງິນ

ດຸນບັນຊີການເງິນ ມີກະແສເງິນໄຫຼອອກສຸດທິ 75,65 ລ້ານໂດລາສະຫະລັດທຽບເທົ່າ ຈາກທີ່ມີກະແສເງິນໄຫຼເຂົ້າສຸດທິ 358,31 ລ້ານໂດລາສະຫະລັດທຽບເທົ່າ ໃນໄຕມາດຜ່ານມາ. ສາເຫດຕົ້ນຕໍແມ່ນຍ້ອນການລົງທຶນອື່ນໆ ມີກະແສເງິນໄຫຼອອກສຸດທິ 428,74 ລ້ານໂດລາສະຫະລັດທຽບເທົ່າ ຈາກທີ່ມີກະແສເງິນໄຫຼເຂົ້າສຸດທິ 87,14 ລ້ານໂດລາສະຫະລັດທຽບເທົ່າ ໃນໄຕມາດຜ່ານມາ. ໃນຂະນະທີ່, ກະແສເງິນລົງທຶນໂດຍກົງຈາກຕ່າງປະເທດ ຍັງສືບຕໍ່ໄຫຼເຂົ້າ ໂດຍສະເພາະໃນບັນດາໂຄງການທີ່ກຳລັງດຳເນີນການ ຊຶ່ງຂະແໜງທີ່ດຶງດູດການລົງທຶນຫຼາຍກວ່າໝູ່ໃນໄຕມາດນີ້ ແມ່ນຂະແໜງພະລັງງານໄຟຟ້າ ກວມເອົາ 29,93%, ຮອງລົງມາແມ່ນຂະແໜງກະສິກຳ ກວມເອົາ 29,10% ແລະ ຂະແໜງອຸດສາຫະກຳບໍ່ແຮ່ ກວມເອົາ 13,17% ຂອງກະແສເງິນລົງທຶນໂດຍກົງຈາກຕ່າງປະເທດທັງໝົດ. ສ່ວນປະເທດທີ່ມາລົງທຶນຫຼາຍທີ່ສຸດແມ່ນ ສປ. ຈີນ ກວມເອົາ 60,99%, ໄທ ກວມເອົາ 29,42% ແລະ ຍີ່ປຸ່ນ ກວມເອົາ 3,27%.

**ຮູບທີ 13. ດຸນບັນຊີການເງິນ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

# ຕາຕະລາງທີ 1. ດັດຊະນີລາຄາຜູ້ຊົມໃຊ້ (Consumer Price Index)

| ໝວດສິນຄ້າ | ໄຕມາດ 1/2020 | ໄຕມາດ 2/2020 | ໄຕມາດ 3/2020 | ໄຕມາດ 4/2020 | ໄຕມາດ 1/2021 |
|---|---|---|---|---|---|
| **ດັດຊະນີລາຄາຜູ້ຊົມໃຊ້ລວມ 12 ໝວດສິນຄ້າ** | **111,61** | **112,35** | **114,35** | **114,43** | **114,02** |
| **ເງິນເຟີ້ລວມ, ບໍ່ລວມນໍ້າມັນເຊື້ອໄຟ** | **111,27** | **112,42** | **114,30** | **114,37** | **113,74** |
| **ເງິນເຟີ້ລວມ, ບໍ່ລວມອາຫານສົດ** | **109,12** | **108,10** | **109,56** | **110,08** | **111,20** |
| **ເງິນເຟີ້ລວມ, ບໍ່ລວມນໍ້າມັນເຊື້ອໄຟ ແລະ ອາຫານສົດ** | **108,31** | **107,86** | **109,08** | **109,63** | **110,35** |
| **ດັດຊະນີແຕ່ລະໝວດສິນຄ້າ** | | | | | |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ | 114,64 | 117,61 | 120,23 | 119,76 | 117,60 |
| 2. ໝວດເຫຼົ້າ ແລະ ຢາສູບ | 106,20 | 105,66 | 106,04 | 106,88 | 108,33 |
| 3. ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ | 116,18 | 116,56 | 117,82 | 119,35 | 120,35 |
| 4. ໝວດທີ່ພັກອາໃສ, ນໍ້າປະປາ, ໄຟຟ້າ ແລະ ເຊື້ອເພີງ | 105,45 | 104,85 | 105,50 | 105,70 | 106,50 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 109,09 | 109,58 | 110,69 | 111,56 | 112,61 |
| 6. ໝວດການຮັກສາສຸຂະພາບ | 106,90 | 108,98 | 110,12 | 110,50 | 110,95 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 110,89 | 108,78 | 110,74 | 111,13 | 113,12 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 109,03 | 103,10 | 108,97 | 110,74 | 111,64 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 104,15 | 103,89 | 104,25 | 104,57 | 105,07 |
| 10. ໝວດການສຶກສາ | 103,30 | 101,62 | 102,93 | 103,62 | 103,25 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | 107,17 | 105,40 | 104,82 | 104,23 | 104,72 |
| 12. ໝວດສິນຄ້າ ແລະ ການບໍລິການອື່ນໆ | 111,63 | 113,05 | 118,18 | 120,18 | 121,20 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

**ໝາຍເຫດ:** ທຽບຖານເດືອນ 12/2015 = 100

# ຕາຕະລາງທີ 2. ອັດຕາເງິນເຟີ້ (Inflation Rate)

| ໝວດສິນຄ້າ | ໄຕມາດ 1/2020 | ໄຕມາດ 2/2020 | ໄຕມາດ 3/2020 | ໄຕມາດ 4/2020 | ໄຕມາດ 1/2021 |
|---|---|---|---|---|---|
| **ເງິນເຟີ້ລວມ** | **6,44** | **5,57** | **5,24** | **3,26** | **2,16** |
| **ເງິນເຟີ້ລວມ, ບໍ່ລວມນ້ຳມັນເຊື້ອໄຟ** | **6,47** | **6,07** | **5,55** | **3,56** | **2,22** |
| **ເງິນເຟີ້ລວມ, ບໍ່ລວມອາຫານສົດ** | **3,29** | **1,46** | **2,22** | **1,87** | **1,91** |
| **ເງິນເຟີ້ລວມ, ບໍ່ລວມນ້ຳມັນເຊື້ອໄຟ ແລະ ອາຫານສົດ** | **3,18** | **2,04** | **2,51** | **2,25** | **1,88** |
| **ອັດຕາເງິນເຟີ້ແຕ່ລະໝວດສິນຄ້າ (%)** | | | | | |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ | 10,24 | 10,63 | 8,89 | 4,96 | 2,58 |
| 2. ໝວດເຫຼົ້າ ແລະ ຢາສູບ | 2,41 | 0,66 | 0,64 | 1,33 | 2,00 |
| 3. ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ | 4,83 | 4,63 | 4,82 | 4,80 | 3,59 |
| 4. ໝວດທີ່ພັກອາໄສ, ນ້ຳປະປາ, ໄຟຟ້າ ແລະ ເຊື້ອເພີງ | 0,99 | 0,06 | 0,62 | 0,62 | 1,00 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 4,93 | 4,70 | 5,02 | 4,86 | 3,23 |
| 6. ໝວດການຮັກສາສຸຂະພາບ | 3,63 | 5,28 | 5,80 | 5,68 | 3,79 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 3,07 | -0,12 | 1,09 | 1,07 | 2,01 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 6,27 | 0,00 | 5,12 | 5,74 | 2,39 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 3,04 | 1,93 | 1,02 | 1,01 | 0,89 |
| 10. ໝວດການສຶກສາ | 1,94 | 0,27 | 0,65 | 0,60 | -0,04 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | 1,66 | -1,22 | -1,86 | -2,29 | -2,28 |
| 12. ໝວດສິນຄ້າ ແລະ ການບໍລິການອື່ນໆ | 6,70 | 7,43 | 10,26 | 10,40 | 8,58 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.
**ໝາຍເຫດ:** ທຽບຖານເດືອນ 12/2015 = 100

## ຕາຕະລາງທີ 3. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ (Balance Sheet of the BOL)

ຫົວໜ່ວຍ/Unit: (ຕື້ກີບ/Billion LAK)

| ລາຍການ | ໄຕມາດ 1/2020 | ໄຕມາດ 2/2020 | ໄຕມາດ 3/2020(R) | ໄຕມາດ 4/2020(R) | ໄຕມາດ 1/2021 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **8.359,95** | **7.172,14** | **11.813,11** | **11.575,93** | **11.118,55** |
| ຊັບສິນຕ່າງປະເທດ | 8.987,64 | 7.810,68 | 12.478,44 | 12.261,64 | 11.801,42 |
| ໜີ້ສິນຕ່າງປະເທດ | -627,69 | -638,54 | -665,33 | -685,71 | -682,87 |
| **ຊັບສິນພາຍໃນສຸດທິ** | **20.476,62** | **22.696,78** | **19.362,00** | **20.893,24** | **22.601,61** |
| **ສິນເຊື່ອພາຍໃນສຸດທິ** | **15.596,54** | **17.508,54** | **16.323,24** | **16.969,79** | **17.429,34** |
| ສິນເຊື່ອໃຫ້ລັດຖະບານສຸດທິ | 2.207,44 | 3.948,30 | 2.013,47 | 1.173,38 | 968,98 |
| ສິນເຊື່ອໃຫ້ລັດຖະບານ | 4.793,96 | 4.793,96 | 4.793,96 | 2.509,49 | 2.413,29 |
| ເງິນຝາກລັດຖະບານ | -2.586,52 | -845,66 | -2.780,49 | -1.336,11 | -1.444,31 |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 6.117,29 | 6.141,43 | 6.217,41 | 6.242,90 | 6.285,73 |
| ສິນເຊື່ອໃຫ້ລັດວິສາຫະກິດ | 6.117,29 | 6.141,43 | 6.217,41 | 6.242,90 | 6.285,73 |
| ສິນເຊື່ອໃຫ້ສະຖາບັນການເງິນ | 7.271,81 | 7.418,81 | 8.092,37 | 9.553,51 | 10.174,63 |
| ພັນທະບັດທະນາຄານກາງ | -2.920,64 | -2.951,34 | -2.408,17 | -2.192,76 | -1.655,11 |
| ລາຍການອື່ນໆສຸດທິ | 7.800,72 | 8.139,58 | 5.446,93 | 6.116,22 | 6.827,38 |
| **ຖານເງິນຕາ** | **28.836,57** | **29.868,92** | **31.175,11** | **32.469,17** | **33.720,17** |
| ເງິນສົດຢູ່ນອກວົງຈອນ | 11.145,67 | 10.764,38 | 10.668,23 | 12.195,01 | 12.110,77 |
| ເງິນຝາກ | 17.690,90 | 19.104,54 | 20.506,88 | 20.274,16 | 21.609,40 |
| ເງິນຝາກກະແສລາຍວັນ | 12.844,86 | 15.031,81 | 16.129,43 | 15.714,99 | 16.939,00 |
| ເງິນແຮຝາກບັງຄັບ | 4.166,80 | 3.794,60 | 3.956,89 | 4.093,95 | 4.363,73 |
| ທຶນຈົດທະບຽນຂອງ ທທກ | 647,26 | 262,43 | 384,68 | 403,24 | 252,15 |
| ເງິນຝາກຂອງພາກສ່ວນອື່ນໆ | 31,98 | 15,70 | 35,88 | 61,98 | 54,52 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 4. ຖານະການເງິນຂອງທະນາຄານທຸລະກິດ (Commercial Banks' Survey)

ຫົວໜ່ວຍ/Unit: (ຕື້ກີບ/Billion LAK)

| ລາຍການ | ໄຕມາດ 1/2020 | ໄຕມາດ 2/2020 | ໄຕມາດ 3/2020(R) | ໄຕມາດ 4/2020(R) | ໄຕມາດ 1/2021 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **-16.108,99** | **-15.648,72** | **-14.397,81** | **-13.627,28** | **-10.979,41** |
| ຊັບສິນຕ່າງປະເທດ | 12.467,04 | 13.328,96 | 14.267,11 | 14.142,70 | 18.306,62 |
| ໜີ້ສິນຕ່າງປະເທດ | -28.576,03 | -28.977,68 | -28.664,92 | -27.769,98 | -29.286,03 |
| **ຄັງສະສົມສຸດທິ** | **32.108,98** | **33.693,52** | **36.604,49** | **35.608,19** | **38.832,39** |
| ຄັງສະສົມ | 37.372,67 | 38.925,43 | 42.131,52 | 42.131,46 | 45.520,31 |
| ເງິນກູ້ຢືມຈາກ ທຫລ | -5.263,69 | -5.231,91 | -5.527,03 | -6.523,27 | -6.687,92 |
| **ສິນເຊື່ອໃຫ້ລັດຖະບານສຸດທິ** | **3.163,02** | **3.330,09** | **3.950,63** | **6.456,31** | **5.973,65** |
| ເປັນສະກຸນເງິນກີບ | 3.845,13 | 4.016,48 | 4.676,35 | 7.078,35 | 6.743,11 |
| ເປັນສະກຸນເງິນຕາຕ່າງປະເທດ | -682,10 | -686,40 | -725,73 | -622,03 | -769,46 |
| **ຊັບສິນພາຍໃນສຸດທິ (ຍົກເວັ້ນສິນເຊື່ອໃຫ້ລັດຖະບານ)** | **71.204,41** | **72.234,27** | **72.652,96** | **74.083,58** | **71.585,64** |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 75.279,63 | 76.284,50 | 76.708,04 | 78.237,87 | 76.948,82 |
| ເປັນສະກຸນເງິນຕາຕ່າງປະເທດ | 38.945,77 | 39.701,77 | 39.491,37 | 40.012,02 | 39.015,90 |
| ສິນເຊື່ອໃຫ້ພາກເອກະຊົນ | 69.399,41 | 70.390,22 | 70.771,06 | 72.301,32 | 71.291,31 |
| ເປັນສະກຸນເງິນຕາຕ່າງປະເທດ | 33.463,57 | 34.195,07 | 33.952,88 | 34.504,85 | 33.813,76 |
| ສິນເຊື່ອໃຫ້ພາກສ່ວນລັດວິສາຫະກິດ | 5.880,22 | 5.894,28 | 5.936,98 | 5.936,55 | 5.657,51 |
| ເປັນສະກຸນເງິນຕາຕ່າງປະເທດ | 5.482,20 | 5.506,70 | 5.538,49 | 5.507,17 | 5.202,14 |
| **ຊັບສິນອື່ນໆສຸດທິ** | **-4.075,22** | **-4.050,23** | **-4.055,07** | **-4.154,29** | **-5.363,17** |
| **ເງິນຝາກລູກຄ້າ** | **90.367,43** | **93.609,16** | **98.810,26** | **102.520,80** | **105.412,26** |
| ເປັນເງິນກີບ | 42.060,45 | 43.215,52 | 44.664,88 | 45.803,29 | 46.587,92 |
| ເປັນສະກຸນເງິນຕາຕ່າງປະເທດ | 48.306,98 | 50.393,64 | 54.145,38 | 56.717,50 | 58.824,34 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 5. ຖານະການເງິນຂອງລະບົບທະນາຄານ (Monetary Survey)

ຫົວໜ່ວຍ/Unit: (ຕື້ກີບ/Billion LAK)

| ລາຍການ | ໄຕມາດ 1/2020 | ໄຕມາດ 2/2020 | ໄຕມາດ 3/2020 (R) | ໄຕມາດ 4/2020 (R) | ໄຕມາດ 1/2021 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **-7.749,04** | **-8.476,58** | **-2.584,71** | **-2.051,35** | **139,13** |
| ຊັບສິນຕ່າງປະເທດ | 21.454,67 | 21.139,64 | 26.745,55 | 26.404,34 | 30.108,03 |
| ໜີ້ສິນຕ່າງປະເທດ | -29.203,72 | -29.616,22 | -29.330,25 | -28.455,69 | -29.968,90 |
| **ຊັບສິນພາຍໃນສຸດທິ** | **106.743,54** | **110.117,76** | **109.495,73** | **113.946,36** | **114.071,65** |
| **ສິນເຊື່ອພາຍໃນ** | **86.767,39** | **89.704,32** | **88.889,54** | **92.110,46** | **90.177,18** |
| ສິນເຊື່ອໃຫ້ລັດຖະບານສຸດທິ | 5.370,46 | 7.278,39 | 5.964,10 | 7.629,69 | 6.942,63 |
| ສິນເຊື່ອໃຫ້ລັດຖະບານ | 10.506,51 | 10.909,67 | 11.403,75 | 11.270,65 | 11.819,08 |
| ເງິນຝາກລັດຖະບານ | -5.136,05 | -3.631,28 | -5.439,65 | -3.640,96 | -4.876,45 |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 81.396,92 | 82.425,93 | 82.925,44 | 84.480,76 | 83.234,55 |
| ສິນເຊື່ອໃຫ້ລັດວິສາຫະກິດ | 11.997,51 | 12.035,71 | 12.154,39 | 12.179,44 | 11.943,24 |
| ສິນເຊື່ອໃຫ້ພາກເອກະຊົນ | 69.399,41 | 70.390,22 | 70.771,06 | 72.301,32 | 71.291,31 |
| ລາຍການອື່ນໆສຸດທິ | 19.976,15 | 20.413,44 | 20.606,19 | 21.835,91 | 23.894,47 |
| **ປະລິມານເງິນຕາມຄວາມໝາຍກວ້າງ** | **98.994,50** | **101.641,19** | **106.911,02** | **111.895,01** | **114.210,78** |
| **ປະລິມານເງິນຄວາມໝາຍແຄບ** | **14.552,91** | **13.733,74** | **13.919,89** | **15.310,12** | **14.732,46** |
| ເງິນຢູ່ນອກລະບົບທະນາຄານ | 8.595,10 | 8.016,32 | 8.064,89 | 9.312,24 | 8.744,01 |
| ເງິນຝາກກະແສລາຍວັນ | 5.957,81 | 5.717,41 | 5.855,00 | 5.997,88 | 5.988,44 |
| **ປະລິມານເງິນປະເພດອື່ນໆ** | **84.441,58** | **87.907,45** | **92.991,13** | **96.584,90** | **99.478,33** |
| ເງິນຝາກປະຢັດ ແລະ ຝາກມີກຳນົດ | 36.134,60 | 37.513,81 | 38.845,75 | 39.867,39 | 40.653,99 |
| ເງິນຝາກເປັນເງິນຕາຕ່າງປະເທດ | 48.306,98 | 50.393,64 | 54.145,38 | 56.717,50 | 58.824,34 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 6. ຊັບສິນຂອງທະນາຄານທຸລະກິດ (Assets of Commercial Banks)

ຫົວໜ່ວຍ/Unit: (ຕື້ກີບ/Billion LAK)

| ລາຍການ | ໄຕມາດ 1/2020 | ໄຕມາດ 2/2020 | ໄຕມາດ 3/2020(R) | ໄຕມາດ 4/2020(R) | ໄຕມາດ 1/2021 |
|---|---|---|---|---|---|
| ທະນາຄານທຸລະກິດລັດ + ທະນາຄານສະເພາະກິດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **65.618,51** | **66.311,91** | **69.473,13** | **71.234,64** | **75.273,63** |
| ອັດຕາສ່ວນ (%) | 43,58 | 43,26 | 43,36 | 43,68 | 43,95 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 4,12 | 1,06 | 4,77 | 2,54 | 5,67 |
| ທະນາຄານຮ່ວມທຶນ | | | | | |
| **ຍອດຊັບສິນ (ຕື້ກີບ)** | **13.413,10** | **12.920,25** | **13.981,28** | **13.675,94** | **14.177,90** |
| ອັດຕາສ່ວນ (%) | 8,91 | 8,43 | 8,73 | 8,39 | 8,28 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 4,76 | -3,67 | 8,21 | -2,18 | 3,67 |
| ທະນາຄານເອກະຊົນ | | | | | |
| **ຍອດຊັບສິນ (ຕື້ກີບ)** | **28.343,44** | **29.560,43** | **30.586,26** | **32.443,69** | **33.841,12** |
| ອັດຕາສ່ວນ (%) | 18,82 | 19,29 | 19,09 | 19,90 | 19,76 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 1,92 | 4,29 | 3,47 | 6,07 | 4,31 |
| ທະນາຄານສາຂາຕ່າງປະເທດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **43.199,98** | **44.482,50** | **46.164,89** | **45.717,19** | **47.997,70** |
| ອັດຕາສ່ວນ (%) | 28,69 | 29,02 | 28,82 | 28,04 | 28,02 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 1,76 | 2,97 | 3,78 | -0,97 | 4,99 |
| ລວມທັງໝົດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **150.575,03** | **153.275,08** | **160.205,55** | **163.071,45** | **171.290,34** |
| ອັດຕາສ່ວນ (%) | 100,00 | 100,00 | 100,00 | 100,00 | 100,00 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 3,07 | 1,79 | 4,52 | 1,79 | 5,04 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 7. ອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ (Official and Parallel Market Exchange Rate)

| ໄຕມາດ/ປີ | ກີບ/ໂດລາສະຫະລັດ | | | ກີບ/ບາດ | | |
|---|---|---|---|---|---|---|
| | ອັດຕາສະເລ່ຍ ທທກ | ອັດຕາສະເລ່ຍ ຕະຫຼາດ | ສະເລ່ຍທົ່ວລະບົບ | ອັດຕາສະເລ່ຍ ທທກ | ອັດຕາສະເລ່ຍ ຕະຫຼາດ | ສະເລ່ຍທົ່ວລະບົບ |
| ໄຕມາດ 1/2013 | 7.897,90 | 7.904,22 | **7.901,06** | 265,12 | 264,92 | **265,02** |
| ໄຕມາດ 2/2013 | 7.692,53 | 7.691,30 | **7.691,92** | 258,72 | 258,50 | **258,61** |
| ໄຕມາດ 3/2013 | 7.815,12 | 7.939,30 | **7.877,21** | 249,97 | 255,04 | **252,51** |
| ໄຕມາດ 4/2013 | 7.935,95 | 8.007,74 | **7.971,84** | 251,61 | 254,01 | **252,81** |
| ໄຕມາດ 1/2014 | 8.029,33 | 8.055,14 | **8.042,23** | 247,44 | 252,11 | **249,77** |
| ໄຕມາດ 2/2014 | 8.050,00 | 8.066,23 | **8.058,11** | 249,75 | 250,83 | **250,29** |
| ໄຕມາດ 3/2014 | 8.043,06 | 8.078,12 | **8.060,59** | 251,60 | 251,70 | **251,65** |
| ໄຕມາດ 4/2014 | 8.059,67 | 8.078,93 | **8.069,30** | 248,51 | 250,67 | **249,59** |
| ໄຕມາດ 1/2015 | 8.108,95 | 8.145,80 | **8.127,37** | 250,30 | 247,48 | **248,89** |
| ໄຕມາດ 2/2015 | 8.104,36 | 8.116,02 | **8.110,19** | 246,78 | 247,77 | **247,28** |
| ໄຕມາດ 3/2015 | 8.160,49 | 8.211,00 | **8.185,74** | 235,57 | 237,05 | **236,31** |
| ໄຕມາດ 4/2015 | 8.151,05 | 8.205,25 | **8.178,15** | 229,52 | 230,24 | **229,88** |
| ໄຕມາດ 1/2016 | 8.134,21 | 8.166,02 | **8.150,12** | 229,75 | 229,77 | **229,76** |
| ໄຕມາດ 2/2016 | 8.113,33 | 8.135,37 | **8.124,35** | 231,50 | 231,89 | **231,70** |
| ໄຕມາດ 3/2016 | 8.095,42 | 8.160,44 | **8.127,93** | 233,80 | 234,49 | **234,15** |
| ໄຕມາດ 4/2016 | 8.160,74 | 8.469,57 | **8.315,16** | 232,39 | 240,13 | **236,26** |
| ໄຕມາດ 1/2017 | 8.194,25 | 8.470,05 | **8.332,15** | 235,14 | 239,73 | **237,44** |
| ໄຕມາດ 2/2017 | 8.213,55 | 8.493,84 | **8.353,69** | 241,47 | 247,01 | **244,24** |
| ໄຕມາດ 3/2017 | 8.278,93 | 8.453,34 | **8.366,13** | 250,05 | 252,90 | **251,47** |
| ໄຕມາດ 4/2017 | 8.300,02 | 8.385,83 | **8.342,93** | 254,03 | 255,60 | **254,81** |
| ໄຕມາດ 1/2018 | 8.286,43 | 8.319,52 | **8.302,97** | 264,16 | 264,54 | **264,35** |
| ໄຕມາດ 2/2018 | 8.340,60 | 8.437,98 | **8.389,29** | 263,72 | 265,60 | **264,66** |
| ໄຕມາດ 3/2018 | 8.469,66 | 8.739,33 | **8.604,49** | 262,42 | 266,26 | **264,34** |
